*LAO*

ເລື້ອງຂ່າວກ່ຽວກັບພະຍາດເຂົ້າສມອງ
ຊັ້ນປີທີ 6-12

ພໍ່ແມ່ ຫລື ຜູ້ປົກຄອງທີ່ຮັກແພງ:

ທ່ານກຳລັງໄດ້ຮັບໜັງສືອັນນີ້ ຍ້ອນວ່າ ທ່ານມີນັກຮຽນທີ່ເຂົ້າຢູ່ໃນ ໂຮງຮຽນຣັຖເມືອງຊີອາໂຕ ໃນຊັ້ນ ປີທີ 6 ເຖິງ 12. ໂດຍປະຕິບັດຕາມກົດໝາຍ RCW 28A.210.080, ທາງສະພານິຕິບັນຍັດໄດ້ຮຽກຮ້ອງໃຫ້ທ່ານຈັດຫາເອົາເລື້ອງກ່ຽວກັບ ສາເຫດ, ອາການຕ່າງໆ ແລະ ວິທີການປ້ອງກັນພະຍາດເຂົ້າສມອງນີ້ມາໃຫ້. ອັນນີ້ ສາມາດເປັນເລື້ອງພະຍາດທີ່ເຮັດໃຫ້ຕາຍໄດ້, ດັ່ງນັ້ນແຫລະ ມັນຈຶ່ງ ເປັນສິ່ງສຳຄັນ ທີ່ຈະຕ້ອງຮູ້ຈັກເລື້ອງຂ່າວອັນນີ້ນຳ.

ພະຍາດເຂົ້າສມອງນີ້ ໄດ້ເກີດມາໂດຍກຸ່ມຂອງເຊື້ອງບັກຕີເຣັຍ ຊຶ່ງອາໄສຢູ່ຕາມຮູດັງ ແລະ ຕາມລຳຄໍ; ອັນນີ້ສາມາດກໍ່ໃຫ້ເກີດພະຍາດ ທີ່ເອີ້ນວ່າ ພະຍາດເຂົ້າສມອງໄດ້. ຜູ້ໃຫຍ່ ແລະ ຊາວໜຸ່ມທັງຫລາຍ ມີອັດຕຣາສ່ວນຂອງການຕິດພະຍາດນີ້ສູງຂື້ນ, ເມື່ອປຽບທຽບກັບ ປວງຊົນທົ່ວໄປແລ້ວ. ອາການຂອງພະຍາດນີ້ ອາດລວມມີໄຂ້, ໜາວສະບັ້ນ, ຕຸ່ມຜື່ດຕາມຜີວ, ປວດຫົວ, ສັບສົນວິນວາຍ, ແລະ ຄໍແຂງ. ພະຍາດໄດ້ຂຍາຍຕົວໄປໂດຍການສັມຜັດກັບ ສິ່ງທີ່ສົກກະປົກເປັນພະຍາດ, ລວມທັງການຈູບກັນ, ໄອອອກມາ, ຈາມ, ຫລື ກິນອາຫານ ຫລື ດື່ມນ້ຳຮ່ວມກັນ.

ກະຊວງສາທາຣະນະສຸກແຫ່ງຣັຖວໍຊິງຕັນ ຢາກໃຫ້ທ່ານໄດ້ຮູ້ຈັກເອົາໄວ້ດ້ວຍ ກ່ຽວກັບຄວາມເຈັບປ່ວຍອັນນີ້ ແລະ ການສັກຢາປ້ອງກັນມີໃຫ້ໄດ້ ເພື່ອປ້ອງກັນ ພະຍາດເຂົ້າສມອງນີ້. ການສັກຢາປ້ອງກັນ ກໍສາມາດຊ່ວຍປ້ອງກັນເຖິງ 83% ຈາກການເປັນພະຍາດເຂົ້າສມອງນີ້ ຢູ່ໃນພວກຜູ້ໃຫຍ່ ແລະ ຊາວໜຸ່ມ. ໃນຂນະທີ່ມີຄວາມຈຳເປັນຕ້ອງສັກຢາປ້ອງກັນ ໃຫ້ແກ່ພວກເດັກທີ່ເຂົ້າຂັ້ນມັທຍົມຕົ້ນ (ອາຍຸ 11 ປີ - 12 ປີ) ແລະ ເຂົ້າຂັ້ນມັທຍົມປາຍ (ອາຍຸ 15 ປີ) ການສັກຢາປ້ອງກັນນີ້ ສາມາດເກີດປໂຍດ ແກ່ໄວລຸ່ນອາຍຸສິບກວ່າປີ ແລະ ຊາວໜຸ່ມແກ່ໄດ້. **ການສັກຢາປ້ອງກັນນີ້ ບໍ່ຈຳເປັນຕ້ອງໄດ້ເອົາ ສຳຫລັບການໄປເຂົ້າໂຮງຮຽນ.**

ທາງກະຊວງສາທາຣະນະສຸກ ຮຽກຮ້ອງໃຫ້ທ່ານ ຈົ່ງຮຽນຮູ້ອີກກ່ຽວກັບພະຍາດເຂົ້າສມອງນີ້ ແລະ ເວົ້າລົມກັບ ນາຍໝໍຂອງເດັກທ່ານກ່ຽວກັບການສັກຢາປ້ອງກັນ. ທ່ານຍັງສາມາດໄດ້ຮັບເລື້ອງຂ່າວຫລາຍຕື່ມອີກ ຈາກການເບິ່ງຕາມເວັບຊາຍເຫລົ່ານີ້ອີກ :

- **ພັບລິກແຮ່ວເມືອງຊີອາໂຕ / ຄິງຄາວຕີ້ Public Health Seattle/King County --** (206) 296-4600
  www.metrokc.gov/health/immunization/clinics.htm

- **ໂຄງການສັກຢາ Washington State Department of Health Immunization Program**
  www.doh.wa.gov/cfh/Immunize/meningococcal.htm

- **ສູນກາງຄວບຄຸມ ແລະ ປ້ອງກັນພະຍາດ Centers for Disease Control and Prevention**
  ເລື້ອງສັກຢາປ້ອງກັນ: www.cdc.gov/nip/publications/vis/vis-mening.pdf
  ເລື້ອງພະຍາດ: www.cdc.gov.ncidod/dbmd/diseaseinfo/meningococcal_g.htm
  ເລື້ອງເອກະສານຂໍ້ເທັດຈິງຕ່າງໆ: www.cdc.gov/nip/vaccine/meninig/mening_fs.pdf

ຜູ້ຈັດການໂຄງການ
ພະແນກບໍຣິການສຸຂະອານາໄມຂອງນັກຮຽນ
ໂຮງຮຽນຣັຖເມືອງຊີອາໂຕ

Adopted September 2005